ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 3773 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 14 ກັນຍາ 2018

## ໜັງສືແຈ້ງການ

ກະຊວງໂຍທາທິການ ແລະ ຂົນສົ່ງ
ຂາເຂົ້າ ເລກທີ 21471
ວັນທີ 20 ກັນຍາ 2018

ເຖິງ: - ບັນດາກະຊວງ, ອົງການທຽບເທົ່າ, ມະຫາວິທະຍາໄລ, ສະຖາບັນການສຶກສາ, ວິທະຍາໄລ ແລະ ໂຮງຮຽນ;

- ບັນດາພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ, ພໍ່, ແມ່, ຜູ້ປົກຄອງ ແລະ ນັກຮຽນ-ນັກສຶກສາ.

ເລື່ອງ: ກົມກິດຈະການນັກສຶກສາໄດ້ເປີດນຳໃຊ້ສູນ ບໍລິການນັກສຶກສາ ຢ່າງເປັນທາງການ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມກິດຈະການນັກສຶກສາ ສະບັບເລກທີ 502/ສສກ, ລົງວັນທີ 2 ກຸມພາ 2018;

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍແຈ້ງການມາຍັງທ່ານຊາບວ່າ: ກົມກິດຈະການນັກສຶກສາໄດ້ເປີດນຳໃຊ້ສູນບໍລິການນັກສຶກສາ ຢ່າງເປັນທາງການເລີ່ມແຕ່ວັນທີ 3 ກັນຍາ 2018 ເປັນຕົ້ນມາ ໜ້າທີ່ຕົ້ນຕໍຂອງສູນມີດັ່ງນີ້:

1) ໃຫ້ຄຳປຶກສາ ແລະ ແນະນຳນັກຮຽນ-ນັກສຶກສາ ທີ່ຈະໄປຮຽນຕ່າງປະເທດ ໂດຍສະເພາະປະເທດ ສສ ຫວຽດນາມ ແລະ ສປ ຈີນ;
2) ບໍລິການຟອມ ແລະ ເອກະສານທີ່ກ່ຽວກັບທຶນການສຶກສາ;
3) ບໍລິການດ້ານຂໍ້ມູນຂ່າວສານການສຶກສາ, ການສະໝັກທຶນ, ການປະກອບຟອມ ແລະ ອື່ນໆ;
4) ສຶກສາອົບຮົມນັກຮຽນ-ນັກສຶກສາ ຜູ້ທີ່ໄດ້ທຶນການສຶກສາ ກ່ອນຈະອອກເດີນທາງໄປຮຽນຕ່າງປະເທດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງເພື່ອຊາບຕາມນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ນ.ຂັນທະລີ ສິຣິພົງພັນ

ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ (ເຂດສະໜາມກິລາເຈົ້າອານຸວົງ), ຖະໜົນເລກເຮືອງ, ຕູ້ ປ.ນ 067, ໂທ: 021 255035, ແຟັກ: 021 265094 Email: dsa.moes@yahoo.com